# ຄວາມຮຸນແຮງທາງເພດ: **ການຂ້າມຜ່ານອຸປະສັກທີ່ບໍ່ສາມາດຄາດການໄດ້ຕໍ່ການດຳເນີນການກ່ຽວກັບດິນຟ້າອາກາດທີ່ມີປະສິດທິພາບ**



ສັງລວມຫຍໍ້ນະໂຍບາຍນີ້ແມ່ນໄດ້ສ້າງຂຶ້ນໂດຍໂຄະຊ່ວຍເຫຼືອການສິ້ນສຸດຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກນ້ອຍ (VAWC), ເປັນສ່ວນໜຶ່ງຂອງສິ່ງທີ່ເຮັດວຽກເພື່ອປ້ອງກັນຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກຍິນຂອງອັງກິດ (UK): ຜົນກະທົບຢູ່ທີ່ໂຄງການ Scale ('ສິ່ງທີ່ເຮັດວຽກ II ຫຼື What Works II'). ກອງທຶນແມ່ນໄດ້ຮັບການຈັດການໂດຍຄະນະກຳມະການຊ່ວຍເຫຼືອສາກົນ. ບົດລາຍງານນີ້ແມ່ນໄດ້ພັດທະນາຂຶ້ນຮ່ວມກັບລະຫວ່າງລັດຖະບານອັງກິດ ແລະ ອົດສະຕຣາລີ. ທັດສະນະທີ່ສະແດງອອກ ແລະ ຂໍ້ສະເໜີແນະນຳທີ່ເຮັດໄວ້ຢູ່ໃນການຕີພິມເຜີຍແຜ່ນີ້ແມ່ນທັດສະນະຂອງຜູ້ຂຽນຢ່າງດຽວ ແລະ ບໍ່ຈຳເປັນຕ້ອງແມ່ນທັດສະນະ ຫຼື ເຈດຈຳນົງຂອງລັດຖະບານອັງກິດ ຫຼື ອົດສະຕຣາລີ.

ສັງລວມຫຍໍ້ນະໂຍບາຍແມ່ນໄດ້ຂຽນຂຶ້ນໂດຍ Francesca Rhodes of Care International UK, Naomi Clugston of Social Development Direct ແລະ Erika Fraser of Social Development Direct. ມັນສ້າງຂຶ້ນມາຕາມບົດລາຍງານທີ່ມາພ້ອມທີ່ໃຫ້ລາຍລະອຽດການປະກອບສ່ວນໂດຍຜູ້ປະຕິບັດ ແລະ ຜູ້ຊ່ຽວຊານທີ່ເຮັດວຽກຢູ່ທີ່ພາກຕັດກັນລະຫວ່າງການປ່ຽນແປງດິນຟ້າອາກາດ ແລະ ຄວາມຮຸນແຮງທາງເພດ ຫຼື ເອີ້ນວ່າ GBV.

ບົດລາຍງານນີ້ມີການອ້າງອີງເຖິງ ແລະ ລາຍລະອຽດຂອງຄວາມຮຸນແຮງທາງເພດ. ຖ້າທ່ານ ຫຼື ຄົນທີ່ທ່ານຮູ້ຈັກຕ້ອງການຄວາມຊ່ວຍເຫຼືອ, ກະລຸນາຕິດຕໍ່ຝ່າຍບໍລິການຊ່ວຍເຫຼືອຄວາມຮຸນແຮງທາງເພດໃນທ້ອງຖິ່ນຂອງທ່ານ. ເຂົ້າເບິ່ງ lila.help ສຳລັບຂໍ້ມູນກ່ຽວກັບການບໍລິການຊ່ວຍເຫຼືອທີ່ມີໃຫ້ຢູ່ໃນພື້ນທີ່ຂອງທ່ານ.

## ບົດນຳ

ການກ່າວເຖິງ GBV ແມ່ນອົງປະກອບສຳຄັນຈຳເປັນຂອງການດຳເນີນການກ່ຽວກັບດິນຟ້າອາກາດທີ່ມີປະສິດທິພາບ. ການສ້າງສະພາບແວດລ້ອມສະໜັບສະໜູນ, ປອດໄພເຮັດໃຫ້ນະໂຍບາຍດິນຟ້າອາກາດ ແລະ ໂຄງການຕ່າງໆໄດ້ຮັບຜົນປະໂຫຍດຈາກຄວາມຊ່ຽວຊານທີ່ຫຼາກຫຼາຍ ແລະ ທັດສະນະຂອງແມ່ຍິງ, ເດັກຍິງ ແລະ ຄົນຫຼາກຫຼາຍເພດ[1]ໃນຖານະເປັນຜູ້ນຳ, ຜູ້ຕັດສິນນະໂຍບາຍ ແລະ ຜູ້ເຂົ້າຮ່ວມ. ນີ້ສະໜັບສະໜູນໃຫ້ຊຸມຊົນໄດ້ຮັບການຈັດກຽມໃຫ້ພ້ອມດີຂຶ້ນເພື່ອປັບຕົວຕໍ່ຜົນກະທົບທາງດ້ານດິນຟ້າອາກາດ, ສ້າງຄວາມສາມາດໃນການກັບຄືນສູ່ສະພາບເດີມໂດຍໄວ ແລະ ອອກໄປໄກຈາກການປະຕິບັດທີ່ເປັນການທຳລາຍທາງສິ່ງແວດລ້ອມ. ມັນຍັງສຳຄັນຈຳເປັນເພື່ອໃຫ້ແມ່ຍິງ, ເດັກຍິງ ແລະ ຄົນຫຼາກຫຼາຍເພດສາມາດເຂົ້າຮ່ວມກັບການເຄື່ອນໄຫວທາງດິນຟ້າອາກາດ ແລະ ເສດຖະກິດສີຂຽວໂດຍບໍ່ມີຄວາມຢ້ານກົວ ຫຼື ການຂົ່ມຂູ່. ໃນລະຫວ່າງເຫດການສຸກເສີນທາງດ້ານດິນຟ້າອາກາດ, ການກ່າວເຖິງ GBV ຍັງເປັນສ່ວນໜຶ່ງທີ່ສຳຄັນຈຳເປັນໃນການຮັກສາຊຸມຊົນໃຫ້ປອດໄພ.

> ສັງລວມຫຍໍ້ນີ້ມີເປົ້າໝາຍທີ່ຈະຊ່ວຍໃຫ້ຜູ້ວາງນະໂຍບາຍ ແລະ ຜູ້ປະຕິບັດເຂົ້າໃຈວິທີທີ່ກ່າວເຖິງ GBV ສະໜັບສະໜູນປະສິດທິພາບຂອງໂຄງການ ແລະ ນະໂຍບາຍການປ່ຽນແປງດິນຟ້າອາກາດ.

ເຖິງແມ່ນວ່າມີແນວນີ້, GBV ມັກຈະຖືກມອງຂ້າມເພື່ອອອກແບບການດຳເນີນການກ່ຽວກັບດິນຟ້າອາກາດທີ່ມີປະສິດທິພາບ ແລະ ມາຮອດປັດຈຸບັນນີ້ແມ່ນມີໂຄງການສະພາບດິນຟ້າອາກາດຈຳນວນໜຶ່ງໄດ້ເອົາມາດຕະການເຂົ້ານຳເພື່ອປ້ອງກັນ ແລະ ສະໜອງຕອບຕໍ່ GBV. ເຖິງແນວໃດກໍຕາມ, ມີຫຼັກຖານຂອງສາກົນເຕີບໂຕຂຶ້ນມາວ່າສາມາດປ້ອງກັນ GBV ໄດ້, ດ້ວຍການຊ່ວຍເຫຼືອຈຳນວນໜຶ່ງໃນການຫຼຸດຄວາມຮຸນແຮງລົງໄດ້ສຳເລັດເຄິ່ງໜຶ່ງພາຍໃນບໍ່ເທົ່າໃດປີເທົ່ານັ້ນໂດຍການແກ້ໄຂສາເຫດພື້ນຖານ.[2]

ສັງລວມຫຍໍ້ນີ້ມີເປົ້າໝາຍທີ່ຈະຊ່ວຍໃຫ້ຜູ້ວາງນະໂຍບາຍ ແລະ ຜູ້ປະຕິບັດເຂົ້າໃຈວິທີທີ່ກ່າວເຖິງ GBV ສະໜັບສະໜູນປະສິດທິພາບຂອງໂຄງການ ແລະ ນະໂຍບາຍການປ່ຽນແປງດິນຟ້າອາກາດ. ມັນນຳສະເໜີຕົວຢ່າງຂອງການປະຕິບັດທີ່ດີທີ່ເກີດຂຶ້ນມາ ແລະ ໃຫ້ຂໍ້ສະເໜີແນະນຳແກ່ພາກສ່ວນກ່ຽວຂ້ອງທັງໝົດເພື່ອແກ້ໄຂ GBV ຮອບດ້ານເພີ່ມຂຶ້ນ. ສັງລວມຫຍໍ້ນີ້ອາດພາບໃຫ້ເຫັນຕາມຫຼັກຖານຈາກທົ່ວໂລກ, ສະທ້ອນໃຫ້ເຫັນຄວາມກວ້າງຂອງຂອງສິ່ງທ້າທາຍທີ່ໄດ້ປະເຊີນໜ້າ. ເຖິງແນວໃດກໍຕາມ, ໂດຍທີ່ປາຊີຟິກ ແລະ ອາຊີຕາເວັນອອກສຽງໃຕ້ແມ່ນໜຶ່ງໃນພາກພື້ນທີ່ສົ່ງຜົນກະທົບຕໍ່ດິນຟ້າອາກາດຫຼາຍທີ່ສຸດພ້ອມກັບມີຄວາມໂດດເດັ່ນຂອງ GBV ສູງ, ຜູ້ໃຫ້ຂໍ້ມູນສຳຄັນຈາກພາກພື້ນນີ້ຖືກຈັດບູລິມະສິດ. ມັນອາດພາບໃຫ້ເຫັນຕາມການທົບທວນເອກະສານຂອງຫຼັກຖານທີ່ມີຢູ່ ແລະ ການປະຕິບັດຕໍ່ GBV ແລະ ການປ່ຽນແປງດິນຟ້າອາກາດ ແລະ ການສຳພາດພາກສ່ວນກ່ຽວຂ້ອງກັບສະພາບດິນຟ້າອາກາດ ແລະ GBV. ບົດລາຍງານທີ່ປະກອບມານຳໃຫ້ລາຍລະອຽດເພີ່ມເຕີມກ່ຽວກັບສິ່ງທີ່ພົບໃນການຄົ້ນຄວ້າ ແລະ ກໍລະນີສຶກສາ.

ບັນດາຕົວຢ່າງທີ່ມີຢູ່ໃນສັງລວມຫຍໍ້ນະໂຍບາຍນີ້ສະທ້ອນໃຫ້ເຫັນການປະກອບສ່ວນອັນໃຫຍ່ຫຼວງຂອງອົງການຈັດຕັ້ງທີ່ນຳພາໂດຍແມ່ຍິງເຮັດວຽກຢູ່ແນວໜ້າຂອງວິກິດການສະພາບດິນຟ້າອາກາດ. ພວກເຂົາລາຍງານວ່າຜູ້ກະທຳຜິດກຳລັງກະທຳຕໍ່ GBV ໂດຍໄດ້ຮັບການຍົກເວັ້ນໂທດ, ດັ່ງນັ້ນອັນນີ້ກຳລັງກະທົບຕໍ່ຄວາມສາມາດຂອງພະນັກງານ ແລະ ຊຸມຊົນທີ່ເຂົ້າຮ່ວມໃນວຽກງານສະພາບດິນຟ້າອາກາດທີ່ສຳຄັນ ແລະ ດັ່ງນັ້ນມັນຕ້ອງຖືກຢຸດ. ອົງການເຫຼົ່ານີ້ມີຊັບພະຍາກອນຈຳກັດ, ແຕ່ບົດຮຽນທີ່ມາຈາກການປະຕິບັດທີ່ພົ້ນເດັ່ນກຳລັງເກີດຂຶ້ນມາຈາກວຽກງານຂອງເຂົາເຈົ້າ, ສະແດງໃຫ້ເຫັນວ່າມັນເປັນໄປໄດ້ທີ່ຈະຈັດການເລື່ອງ GBV ແລະ ສ້າງຊຸມຊົນທີ່ສາມາດຟື້ນກັບຄືນສູ່ສະພາບເດີມໄດ້ດີກວ່າ ແລະ ປອດໄພກວ່າ.

> *"ການຄົ້ນຄວ້າວິໄຈຢູ່ໃນບັນດາປະເທດອາຊີຕາເວັນອອກສຽງໃຕ້ພົບວ່າອຸນຫະພູມປະຈຳປີສະເລ່ຍເພີ່ມຂຶ້ນ 1 ອົງສາຢູ່ໃນການເພີ່ມຂຶ້ນ 4.5% ໃນຮູບແບບຂອງຄວາມຮຸນແຮງພາຍໃນທາງເພດ ແລະ ທາງຮ່າງກາຍ."*[3]
>
> Anik Gevers, ທີ່ປຶກສາວິຊາການຊ່ຽວຊານ, ທີ່ປຶກສາເອກະລາດ

> *"ຜູ້ເຮັດວຽກກ່ຽວກັບການປ່ຽນແປງດິນຟ້າອາກາດຄວນຖືໄວ້ວ່າ GBV ກຳລັງເກີດຂຶ້ນ ແລະ ຖາມຄຳຖາມວ່າພວກເຮົາຈະເຮັດຫຍັງເພື່ອຫຼຸດຜ່ອນ, ຈັດການ ແລະ ປ້ອງກັນ GBV? ນີ້ຄວນຈະຖືກພິຈາລະນາຢູ່ພາຍໃນຂອງເຂດຂອງໂຄງການສິ່ງແວດລ້ອມ."*
>
> Jamie Wen-Besson, ຜູ້ຈັດການໂຄງການບົດບາດຍິງ-ຊາຍອາວຸໂສ, ສະຫະພາບສາກົນເພື່ອການອະນຸລັກທຳມະຊາດ (IUCN)

ການຈັດການ GBV ປະກອບສ່ວນຕໍ່ການດຳເນີນການກ່ຽວກັບດິນຟ້າອາກາດທີ່ມີປະສິດທິພາບຜ່ານ:

## ການເຮັດໃຫ້ແມ່ຍິງມີຄວາມສາມາດ**ປັບຕົວ ແລະ ສ້າງການກັບຄືນມາສູ່ສະພາບປົກກະຕິໂດຍໄວ**ຕໍ່ການປ່ຽນແປງດິນຟ້າອາກາດ ແລະ ອອກຫ່າງໄປຈາກການປະຕິບັດທີ່ທຳລາຍສິ່ງແວດລ້ອມ

ຄວາມພະຍາຍາມທີ່ສະໜັບສະໜູນຊຸມຊົນເພື່ອໃຫ້ປັບຕົວ ແລະ ສ້າງການກັບຄືນມາສູ່ສະພາບປົກກະຕິໂດຍໄວຕໍ່ການປ່ຽນແປງດິນຟ້າອາກາດຢ່າງມີປະສິດທິພາບຈຳເປັນຕ້ອງມີການມີສ່ວນຮ່ວມຂອງສະມາຊິກຊຸມຊົນທຸກຄົນ. GBV ສາມາດຂັບເຄື່ອນການຍົກເວັ້ນແມ່ຍິງ, ເດັກຍິງ ແລະ ຄົນຫຼາກຫຼາຍທາງເພດຈາກຄວາມພະຍາຍາມເຫຼົ່ານີ້. ການຈັດການ GBV ຜ່ານການດຳເນີນການກ່ຽວກັບດິນຟ້າອາກາດຊ່ວຍເພີ່ມການມີປະສິດທິພາບຂອງພວກເຂົາໃຫ້ໄດ້ສູງສຸດໂດຍການກຳຈັດໜຶ່ງໃນອຸປະສັກຕ່າງໆອອກໄປທີ່ແມ່ຍິງ, ເດັກຍິງ ແລະ ຄົນຫຼາກຫຼາຍເພດປະເຊີນໜ້າຕໍ່ການເຂົ້າຮ່ວມໃນໂອກາດຕ່າງໆເພື່ອສ້າງຊັບສິນ ແລະ ເຂົ້າເຖິງເຕັກໂນໂລຊີທີ່ຈຳເປັນເພື່ອປັບຕົວ ແລະ ປັບປຸງຄວາມເປັນຢູ່ຂອງຊຸມຊົນ ແລະ ຄວາມສາມາດກັບຄືນມາສູ່ສະພາບປົກກະຕິໂດຍໄວ. ຕົວຢ່າງ: ການລິເລີ່ມອັນໜຶ່ງຢູ່ໃນປາຊີຟິກໄດ້ສະແຫວງຫາເພື່ອເຄື່ອນຍ້າຍຊຸມຊົນອອກໄປໄກຈາກພື້ນທີ່ມີການເຊາະເຈື່ອນຂອງຊາຍຝັ່ງ, ແຕ່ເມື່ອແມ່ຍິງປະສົບກັບເຫດການເພີ່ມຂຶ້ນໃນ GBV ຢູ່ໃນການຕັ້ງຖິ່ນຖານໃໝ່, ໂຄງການເສຍຄວາມໄວ້ເນື້ອເຊື່ອໃຈ ແລະ ການຊີ້ເຂົ້າມາທີ່ຈຳເປັນຕ້ອງໄດ້ຂະຫຍາຍອອກໄປສູ່ຊຸມຊົນອື່ນໆ.

ການຈັດການ GBV ຍັງສະໜັບສະໜູນຊຸມຊົນໃຫ້ຍ້າຍອອກໄປໄກຈາກການປະຕິບັດທີ່ສ້າງຄວາມເສຍຫາຍຕໍ່ສະພາບແວດລ້ອມນຳອີກ. ຕົວຢ່າງ: ການສຳພາດກັບຜູ້ປະຕິບັດຢູ່ໃນປະເທດອູກັນດາທີ່ເຮັດວຽກເພື່ອປົກປ້ອງພື້ນທີ່ລຸ່ມນ້ຳໂດຍການຢຸດບໍ່ໃຫ້ຊຸມຊົນເຮັດການປູກຝັງຢູ່ໃນດິນນີ້ໄດ້ເປີດເຜີຍໃຫ້ເຫັນວ່າການດຳລົງຊີວິດທາງເລືອກທີ່ຈັດໃຫ້ແມ່ນໄດ້ເຮັດໃຫ້ຜູ້ເຂົ້າຮ່ວມເພດຍິງມີຄວາມສ່ຽງໃນຮູບແບບຕ່າງໆຂອງ GBV. ນີ້ນຳໄປສູ່ຫຼາຍຄົນໆກັບຄືນມາປູກຝັງຢູ່ພື້ນທີ່ລຸ່ມນ້ຳບ່ອນທີ່ພວກເຂົາຮູ້ສຶກປອດໄພກວ່າ. ໃນທາງກັບກັນ, ອັນນີ້ຫຼຸດຜ່ອນຄວາມສາມາດກັບຄືນມາສູ່ສະພາບປົກກະຕິໂດຍໄວຂອງຊຸມຊົນ ແລະ ໄດ້ປະກອບສ່ວນຕໍ່ການເສື່ອມໂຊມຂອງສະພາບແວດລ້ອມທີ່ໂຄງການສະແຫວງຫາທີ່ຈະເຮັດໃຫ້ສິ້ນສຸດ. ບັນດາຜູ້ປະຕິບັດເຫັນດີວ່າໃຫ້ໂຄງການລະບຸ ແລະ ຈັດການກັບຄວາມສ່ຽງຂອງ GBV ທີ່ດີກວ່າ, ມັນຈະໄດ້ຢູ່ໃນຕຳແໜ່ງທີ່ເຂັ້ມແຂງກວ່າເພື່ອບັນລຸຈຸດມຸ່ງໝາຍຂອງຕົນເອງໃນການຫຼຸດການເສື່ອມໂຊມຕໍ່ສະພາບແວດລ້ອມ ແລະ ສ້າງຄວາມສາມາດໃນການກັບຄືນສູ່ປົກກະຕິໂດຍໄວ ແລະ ຄວາມປອດໄພຂອງຊຸມຊົນ.

> *"ການປະສົບກັບເຫດການ GBV ຫຼື ການດຳລົງຊີວິດຢູ່ກັບໄພຂົ່ມຂູ່ຕໍ່ GBV ທີ່ມີຢູ່ໃນປັດຈຸບັນ ໝາຍຄວາມວ່າແມ່ຍິງ ແລະ ຄອບຄົວກຳລັງເຮັດການຕັດສິນໃຈທີ່ຊັບຊ້ອນ ແລະ ຈັດການກັບຫຼາຍຄວາມສ່ຽງ ແລະ ຄວາມຕ້ອງການ; ພວກເຂົາອາດຈະບໍ່ເອົາເອົາເລື່ອງຄວາມຍືນຍົງທາງດ້ານສິ່ງແວດລ້ອມມາກ່ອນຄວາມປອດໄພທັນທີຂອງພວກເຂົາຢູ່ສະເໝີ"*
>
> Anik Gevers, ທີ່ປຶກສາວິຊາການຊ່ຽວຊານ, ທີ່ປຶກສາເອກະລາດ

## ການສະໜັບສະໜູນການຕັດສິນໃຈເທົ່າທຽມກັນຂອງແມ່ຍິງ ແລະ ການເປັນຜູ້ນຳຢູ່ໃນ**ການປັບຕົວ ແລະ ການຟື້ນຄືນສູ່ສະພາບປົກກະຕິໂດຍໄວ**

GBV ສະແດງອອກໃຫ້ເຫັນເຖິງອຸປະສັກອັນສຳຄັນຕໍ່ການເປັນຜູ້ນຳ ແລະ ການຕັດສິນບັນຫາຂອງແມ່ຍິງ ແລະ ຄົນຫຼາກຫຼາຍເພດຢູ່ໃນໂຄງການດິນຟ້າອາກາດ, ເນື່ອງຈາກພວກເຂົາເຫຼົ່ານັ້ນປະເຊີນໜ້າ ຫຼື ກຳລັງຟື້ນຄືນຈາກຄວາມຮຸນແຮງບໍ່ສາມາດ ຫຼື ເລືອກທີ່ຈະບໍ່ເຂົ້າຮ່ວມໃນກິດຈະກຳຕ່າງໆ, ໃນຂະນະທີ່ຄົນອື່ນໆອາດຈະລັງເລທີ່ຈະເຂົ້າຮ່ວມໃນກິດຈະກຳຕ່າງໆທີ່ຈະເພີ່ມຄວາມສ່ຽງໃນການປະເຊີນໜ້າກັບຄວາມຮຸນແຮງຂອງພວກເຂົາ. ການສຳພາດກັບຜູ້ດຳເນີນການທາງດ້ານດິນຟ້າອາກາດ ແລະ ບັນດາ WRO ຢູ່ໃນກຳປູເຈຍ ແລະ ລາວ ອະທິບາຍວ່າແມ່ຍິງຫຼາຍຄົນຫຼີກລ່ຽງການປະຊຸມຢູ່ສາທາລະນະທີ່ມີຈຸດມຸ່ງໝາຍໃນການພັດທະນາແນວທາງຂອງຊຸມຊົນຕໍ່ການຊອກທາງດ້ານດິນຟ້າອາກາດເນື່ອງຈາກໄພຂົ່ມຂູ່ຂອງຄວາມຮຸນແຮງຈາກສະມາຊິກຊຸມຊົນຜູ້

ຊາຍ ແລະ ສາມີ. ໃນທຳນອງດຽວກັນ, ຢູ່ໃນອິນໂດເນເຊຍ, ຜູ້ໃຫ້ສຳພາດແລກປ່ຽນວ່າຜູ້ນຳທີ່ເປັນແມ່ຍິງແມ່ນຕົກເປັນເປົ້າຂອງການຂົ່ມຂູ່ຄາດຕະກຳ ແລະ ຄວາມຮຸນແຮງເຖິງຊີວິດ, ເຊິ່ງເປັນການກີດກັນບໍ່ໃຫ້ພວກເຂົາເຮັດວຽກກັບຊຸມຊົນຂອງພວກເຂົາເພື່ອສ້າງຄວາມສາມາດໃນການຟື້ນຄືນສູ່ສະພາບປົກກະຕິໂດຍໄວຕໍ່ກັບການປ່ຽນແປງດິນຟ້າອາກາດ. GBV ມັກຈະຖືກກະທຳໂດຍຄູ່ຮ່ວມກັນ, ສະມາຊິກຊຸມຊົນ ແລະ ຜູ້ອື່ນໆໃນຮູບແບບຂອງການຕໍ່ຕ້ານອຳນາດການຕັດສິນໃຈຂອງແມ່ຍິງ.

ການວາງແຜນງານເນັ້ນໃສ່ຊຸມຊົນດ້ວຍການມີການຕັດສິນໃຈທາງເພດເທົ່າທຽມກັນສົ່ງຜົນໃຫ້ມີຜົນໄດ້ຮັບທາງດ້ານດິນຟ້າອາກາດທີ່ດີກວ່າ, ເພາະວ່າມັນສະທ້ອນໃຫ້ເຫັນຄວາມຕ້ອງການຫຼາກຫຼາຍທີ່ວຊຸມຊົນໄດ້ດີຂຶ້ນ.[4] ຕົວຢ່າງ: ການສຳຫຼວດຜູ້ໃຊ້ປ່າໄມ້ 440 ຄົນຢູ່ໃນອິນໂດເນເຊຍ, ເປຣູ ແລະ ທານຊາເນຍພົບວ່າເມື່ອຜູ້ຕັດສິນບັນຫາຢ່າງໜ້ອຍເຄິ່ງໜຶ່ງເປັນແມ່ຍິງ, ຕົ້ນໄມ້ໄດ້ຮັບການອະນຸລັກຮັກສາເພີ່ມຂຶ້ນ.[5] ການຈັດການຄວາມສ່ຽງຂອງ GBV ທີ່ປະສົບມາໂດຍຜູ້ຕັດສິນບັນຫາດິນຟ້າອາກາດ ແລະ ດັ່ງນັ້ນຜູ້ນຳມີຄວາມຈຳເປັນທີ່ຈະຮັບປະກັນການມີສ່ວນຮ່ວມຂອງເພດເທົ່າທຽມກັນ ແລະ ເພີ່ມການມີປະສິດທິພາບຂອງຜົນໄດ້ຮັບທາງດິນຟ້າອາກາດ.

> *42% ຂອງຜູ້ປົກປ້ອງສິດທິມະນຸດທາງສິ່ງແວດລ້ອມແມ່ຍິງທີ່ໄດ້ສຳຫຼວດຢູ່ໃນກຳປູເຈຍ ແລະ ສປປ ລາວ ຊີ້ໃຫ້ເຫັນຄວາມກັງວົນທາງດ້ານຄວາມປອດໄພເປັນອຸປະສັກໃຫຍ່ຫຼວງທີ່ສຸດຕໍ່ການມີສ່ວນຮ່ວມຂອງພວກເຂົາຢູ່ໃນການຈັດການທາງດ້ານຊັບພະຍາກອນທຳມະຊາດ.*[6]

## ການປ້ອງກັນອັນຕະລາຍຕໍ່ບຸກຄົນ ແລະ ຊຸມຊົນໃນລະຫວ່າງ**ເຫດການສຸກເສີນທາງດ້ານດິນຟ້າອາກາດ**

ໄພພິບັດທີ່ເກີດຂຶ້ນມາຈາກການປ່ຽນແປງດິນຟ້າອາກາດເຮັດໃຫ້ແມ່ຍິງ, ເດັກຍິງ ແລະ ຄົນຫຼາກຫຼາຍເພດມີຄວາມສ່ຽງຕໍ່ GBV ເພີ່ມຂຶ້ນ, ລວມທັງການຂູດຮີດ, ການລ່ວງລະເມີດ ແລະ ການຂົ່ມເຫັງທາງເພດ (SEAH) ກະທຳໂດຍຄູ່ຮັກທີ່ກະທຳຜິດ, ຜູ້ບໍ່ແມ່ນຄູ່ຮັກ, ສະມາຊິກຊຸມຊົນ, ຜູ້ຄ້າມະນຸດ, ຜູ້ຕອບໂຕ້ເຫດການສຸກເສີນ ແລະ ບຸກຄະລາກອນມະນຸດສະທຳທ່າມກາງຜູ້ອື່ນໆ.[7] GBV ແລະ SEAH ສາມາດມີຜົນກະທົບທີ່ເປັນອັນຕະລາຍ ແລະ ໄລຍະຍາວຕໍ່ຜູ້ລອດຊີວິດ ແລະ ຊຸມຊົນ. ຢູ່ໃນເຫດການສຸກເສີນທາງດ້ານດິນຟ້າອາກາດ, ຜູ້ລອດຊີວິດຂອງ GBV/SEAH ຍັງສາມາດປະເຊີນໜ້າກັບອຸປະສັກທີ່ສຳຄັນຢູ່ໃນກິດຈະກຳກຽມຄວາມພ້ອມຕໍ່ໄພພິບັດເນື່ອງຈາກຄວາມກັງວົນດ້ານຄວາມປອດໄພ, ການບາດເຈັບ, ມົນທິນ ແລະ ຄວາມສ່ຽງຂອງການຖືກເລືອກປະຕິບັດ ແລະ ການຕໍ່ຕ້ານ. ນີ້ສາມາດບໍ່ໃຫ້ລວມເອົາພວກເຂົາເຂົ້າຮ່ວມໃນກິດຈະກຳຕ່າງໆເຊັ່ນ: ການຝຶກຊ້ອມການຍົກຍ້າຍອອກ ແລະ ກັນບໍ່ໃຫ້ພວກເຂົາໄດ້ຮັບຂໍ້ມູນ ແລະ ຊັບພະຍາກອນທີ່ຈຳເປັນຕໍ່ການມີຊີວິດລອດຂອງພວກເຂົາຢູ່ໃນພາວະວິກິດ. ການລວມເອົາການຫຼຸດຜ່ອນ ແລະ ການຕອບໂຕ້ GBV ແລະ SEAH ເຂົ້າສູ່ຄວາມພະຍາຍາມໃນການກະກຽມຄວາມພ້ອມ ແລະ ການຕອບໂຕ້ເຫດການສຸກເສີນທາງດ້ານດິນຟ້າອາກາດຈະນຳໄປສູ່ການດຳເນີນການທີ່ປອດໄພ ແລະ ມີປະສິດທິພາບຫຼາຍຂຶ້ນທີ່ລວມເອົາແມ່ຍິງ, ເດັກຍິງ ແລະ ຄົນຫຼາຍຫຼາຍເພດເຂົ້າຮ່ວມ ແລະ ເຮັດໃຫ້ໄດ້ຕາມຄວາມຕ້ອງການຂອງພວກເຂົາດີຂຶ້ນ. ຜູ້ປະຕິບັດທີ່ໃຫ້ການສະໜັບສະໜູນຊຸມຊົນປາຊີຟິກທີ່ໄດ້ຮັບຜົນກະທົບຈາກພະຍຸໄຊໂຄຼນອະທິບາຍວ່າຄວາມຫຼົ້ມເຫຼວທີ່ຈະຈັດການຄວາມສ່ຽງ GBV ຕໍ່ສະມາຊິກຂອງຊຸມຊົນ LGBTQIA+ (ເກ, ເລສບ້ຽນ), ໂດຍສະເພາະຄົນຂ້າມເພດຢູ່ໃນສູນການຍົກຍ້າຍອອກນຳໄປສູ່ການເຮັດໃຫ້ຫຼາຍຄົນກັບຄືນສູ່ທີ່ພັກພິງທີ່ຈັດເປັນຜຽນບໍ່ປອດໄພຢູ່ໃນບ່ອນທີ່ໄດ້ຮັບຜົນກະທົບຈາກພະຍຸໄຊໂຄຼນ.  ການຈັດການຄວາມສ່ຽງ GBV ແລະ SEAH ທີ່ເພີ່ມຂຶ້ນທີ່ແມ່ຍິງ, ເດັກຍິງ ແລະ ຄົນຫຼາກຫຼາຍເພດໄດ້ປະສົບໃນລະຫວ່າງເຫດການສຸກເສີນທາງດ້ານດິນຟ້າອາກາດຈະນຳໄປສູ່ການໂຕ້ຕອບເຫດການສຸກເສີນທີ່ປອດໄພກວ່າ ແລະ ມີປະສິດທິພາບກວ່າ.

## ການເຮັດໃຫ້**ນັກເຄື່ອນໄຫວດິນຟ້າອາກາດ**ສາມາດເຮັດວຽກໄດ້ໂດຍບໍ່ມີຄວາມຢ້ານກົວ ຫຼື ການຂົ່ມຂູ່

ການຈັດການ GBV ມີຄວາມສຳຄັນຈຳເປັນເພື່ອໃຫ້ການສະໜັບສະໜູນນັກເຄື່ອນໄຫວການດິນຟ້າອາກາດ ແລະ ຜູ້ປົກປ້ອງສິດທິມະນຸດທາງດ້ານສິ່ງແວດລ້ອມ (EHRDs) ເພື່ອສືບຕໍ່ວຽກຂອງພວກເຂົາຕັ້ງແຕ່ມັນຖືກນຳໃຊ້ມາຕໍ່ເນື່ອງເປັນແທັກຕິດໃຫ້ກັບນັກເຄື່ອນໄຫວງຽບ. ຜູ້ນຳເຜົ່າພື້ນເມືອງຊານ (San) ແລະ EHRD ຈາກບານມີເບຍລາຍງານວ່ານາງຢ້ານທີ່ຈະຍ່າງໄປດ້ວຍຕົວເອງຄົນດຽວເນື່ອງຈາກຜົນຂອງການລ່ວງລະເມີດທີ່ນາງຕົກເປັນເປົ້າ ແລະ ດັ່ງນັ້ນນາງຢູ່ໃນຄວາມສ່ຽງສູງຕໍ່ຄວາມຮຸນແຮງຈາກອົງການປົກຄອງເພາະວ່ານາງເປັນເຜົ່າພື້ນເມືອງ.[8] ການລ່ວງລະເມີດຕໍ່ແມ່ຍິງ ແລະ ເດັກຍິງທາງອອນລາຍແມ່ນນັກເຄື່ອນໄຫວຍັງພົບວ່າມີການເພີ່ມການເຊັນເຊີຕົນເອງຂຶ້ນ, ຈຳກັດການມີສ່ວນຮ່ວມໃນການເຄື່ອນໄຫວ ແລະ ຊີວິດສາທາລະນະ.[9] ສະມາຊິກຄອບຄົວ ແລະ ຊຸມຊົນຍັງສາມາດໄດ້ຮັບຜົນກະທົບ ແລະ ຕົກຢູ່ໃນຄວາມສ່ຽງເນື່ອງຈາກຄວາມສຳພັນຂອງພວກເຂົາກັບນັກເຄື່ອນໄຫວ. ຕົວຢ່າງ: ຜູ້ປົກປ້ອງສິ່ງແວດລ້ອມເຜົ່າພື້ນເມືອງຢູ່ໃນຮອນດູຣັສໄດ້ສົ່ງລູກຫຼານຂອງນາງອອກໄປຫຼັງຈາກມີການຂົ່ມຂູ່ຄວາມຮຸນແຮງແກ້ແຄ້ນກ່ອນທີ່ນາງຈະຖືກຂ້າໃນປີ 2016.[10] ການໃຫ້ການສະໜັບສະໜູນຕໍ່ນັກເຄື່ອນໄຫວທາງດ້ານດິນຟ້າອາກາດ ແລະ EHRDs ເພື່ອໃຫ້ຄາດການໄດ້ ແລະ ຈັດການກັບໄພຂົ່ມຂູ່ຂອງ GBV ສາມາດຊ່ວຍຮັບປະກັນໃຫ້ພວກເຂົາສາມາດສືບຕໍ່ວຽກຂອງພວກເຂົາໄດ້ຢ່າງປອດໄພ.

> *ການສຳຫຼວດຜູ້ດຳເນີນການເດັກຍິງຫຼາຍກວ່າ 1000 ຄົນທົ່ວໂລກ, ລວມທັງນັກເຄື່ອນໄຫວທາງດ້ານດິນຟ້າອາກາດ ແລະ ສິ່ງແວດລ້ອມພົບວ່າມີພຽງແຕ່ 50% ຮູ້ສຶກເວົ້າໄດ້ສະບາຍກ່ຽວກັບການເຄື່ອນໄຫວຂອງພວກເຂົາຢູ່ພາຍໃນຊຸມຊົນຂອງພວກເຂົາສຳລັບຄວາມຢ້ານກົວການລ່ວງລະເມີດ ແລະ ການຂົ່ມເຫັງ ຫຼື ການຂັບໄລ່.*[11]

## ການສະໜັບສະໜູນ 'ການຫັນປ່ຽນທີ່ເປັນທຳ'

ການຈັດການການຂູດຮີດ, ການລ່ວງລະເມີດ ແລະ ການຂົ່ມເຫັງທາງເພດ (SEAH) ແລະ GBV ຊ່ວຍໃຫ້ຮັບປະກັນການຫັນປ່ຽນໄປສູ່ເສດຖະກິດຄາບອນຕ່ຳບໍ່ເປັນອັນຕະລາຍ, ສ້າງຄວາມເຊື່ອໝັ້ນຂອງຊຸມຊົນໃນການຫັນປ່ຽນ ແລະ ເຮັດໃຫ້ຄວາມພະຍາຍາມສາມາດໄດ້ຮັບຜົນປະໂຫຍດຈາກຄວາມຊ່ຽ%ຊານ ແລະ ພອນສະຫວັນຂອງແມ່ຍິງ, ເດັກຍິງ ແລະ ຄົນຫຼາກຫຼາຍເພດ. GBV ແລະ SEAH ມີຜົນກະທົບທີ່ເປັນອັນຕະລາຍໃຫຍ່ຫຼວງ ແລະ ໄລຍະຍາວຕໍ່ຜູ້ລອດຊີວິດ ແລະ ຊຸມຊົນ. ຫຼັກຖານທີ່ປາກົດຂຶ້ນມາສະແດງໃຫ້ເຫັນວ່າຄວາມສ່ຽງຂອງ SEAH ຢູ່ໃນບາງອຸດສາຫະກຳພະລັງງານສະອາດ, ເຊິ່ງມັກຈະແມ່ນຜູ້ຊາຍເປັນຜູ້ໂດດເດັ່ນຄວບຄຸມ ຫຼື ຈຳເປັນຕ້ອງມີການກໍ່ສ້າງຂະໜາດໃຫຍ່. ການເຮັດບໍ່ແຮ່ເພື່ອຊັບພະຍາກອນທຳມະຊາດໃຊ້ຢູ່ໃນການຜະລິດພະລັງງານທົດແທນເຊັ່ນ: ລິທຽມ, ໂຄບານ, ມັງການ, ພະແລັດຕິນຳ, ອາລູມິນຽມ ແລະ ທອງເຫຼືອໄດ້ຖືກເຊື່ອມໂຍງກັບການລ່ວງລະເມີດສິດທິມະນຸດ, ລວມທັງຕົວຢ່າງຂອງ GBV.[12] ຢູ່ໃນການຫັນປ່ຽນໄປສູ່ເສດຖະກິດຄາບອນຕ່ຳ, ທ່າແຮງຂອງພະລັງງານທີ່ຂັບເຄື່ອນຄວາມຮຸນແຮງນີ້ຕ້ອງຖືກຈັດການເພື່ອໃຫ້ແນ່ໃຈວ່າຄວາມພະຍາຍາມເຫຼົ່ານີ້ 'ບໍ່ມີອັນຕະລາຍ'. ບໍ່ດັ່ງນັ້ນ, ຄວາມສ່ຽງຂອງ GBV ແລະ SEAH ເປັນບ່ອນທຳລາຍຄວາມເຊື່ອໝັ້ນຂອງຊຸມຊົນ ແລະ ການມີສ່ວນພົວພັນຢູ່ໃນອຸດສາຫະກຳພະລັງງານສະອາດ ແລະ ດັ່ງນັ້ນຈະເປັນການຈັດຕັ້ງປະຕິບັດ ແລະ ຄວາມຍືນຍົງຂອງຈຸດປະສົງທາງດ້ານດິນຟ້າອາກາດ.

ການຫັນປ່ຽນສູ່ເສດຖະກິດສີຂຽວອາດຈະສົ່ງຜົນຕໍ່ການເສຍວຽກຢູ່ພາຍໃນຂະແໜງການຕ່າງໆທີ່ມີຜົນກະທົບທາງດ້ານສິ່ງແວດລ້ອມທາງທີ່ເປັນຜົນເສຍ, ຫຼາຍກໍລະນີຈະແມ່ນຜູ້ຊາຍເປັນຄົນຄຸມ. ຫຼັກຖານຈາກທົ່ວໂລກພົບວ່າການຫວ່າງງານ ແລະ ຄວາມເຄັ່ງຮ້ອນທາງດ້ານການເງິນເພີ່ມຄວາມສ່ຽງຂອງຄວາມຮຸນແຮງທີ່ໄດ້ກະທຳໂດຍຜູ້ຊາຍທີ່ບໍ່ສາມາດຊອກ ຫຼື ຮັກສາວຽກໄວ້ໄດ້.[13] ຢູ່ໃນຊຸມຊົນບໍ່ຖ່ານຫີນໃນ 'ສາຍສົ່ງທອງເຫຼືອງເກົ່າ' ຂອງແຊມເບຍ, ສະຫະລັດ, ໂປໂລ່ຍ ແລະ ສະຫະລາດຊະອານາຈັກຄົ້ນຄວ້າພົບວ່າການປິດບໍ່ແຮ່ ແລະ ການຫວ່າງງານໄດ້ນຳໄປສູ່ຄວາມເຄັ່ງຮ້ອນທາງດ້ານການເງິນ, ຄວາມເຄັ່ງຕຶງຂອງຄົວເຮືອນ ແລະ ຄວາມຮຸນແຮງຂອງຄູ່ຮັກກະທຳຜິດເພີ່ມຂຶ້ນ.[14] ການພິຈາລະນາລະອຽດ ແລະ ການຫຼຸດຜ່ອນທ່າແຮງເຫຼົ່ານີ້ ແລະ ພວກມັນເພີ່ມຄວາມສ່ຽງຂອງ GBV ແມ່ນຂັ້ນຕອນໜຶ່ງທີ່ຈຳເປັນເພື່ອການບັນລຸຜົນ 'ການຫັນປ່ຽນທີ່ເປັນທຳ' ທີ່ສະໜັບສະໜູນສິດທິມະນຸດ. ຖ້າການຫັນປ່ຽນໄປສູ່ເສດຖະກິດຄາບອນຕ່ຳເຊື່ອມໂຍງກັບການເພີ່ມຂຶ້ນໃນ GBV ແລະ SEAH ຢູ່ພາຍໃນຊຸມຊົນຕ່າງໆ, ນີ້ສາມາດ

ເປັນບ່ອນທຳລາຍການສະໜັບສະໜູນຂອງຊຸມຊົນຮ້າຍແຮງ ແລະ ການມີສ່ວນເຂົ້າຮ່ວມໃນການລິເລີ່ມ 'ການຫັນປ່ຽນທີ່ເປັນທຳ'.

'ການຫັນປ່ຽນທີ່ເປັນທຳ' ຍັງສ້າງໂອກາດອັນໃໝ່ຢູ່ໃນເສດຖະກິດສີຂຽວ, ເຊິ່ງຈະໄດ້ຮັບຜົນປະໂຫຍດຈາກຄວາມຊ່ຽວຊານທີ່ສຳຄັນຂອງແມ່ຍິງ ແລະ ຄົນຫຼາກຫຼາຍເພດເຮັດວຽກໃນທົ່ວຂະແໜງການຕ່າງໆ. ເຖິງແນວໃດກໍຕາມ, ຄວາມສ່ຽງຂອງ GBV ແລະ SEAH ຢູ່ພາຍໃນອຸດສາຫະກຳເຫຼົ່ານີ້ເຮັດໃຫ້ມີອຸປະສັກສຳຄັນຕໍ່ການເຂົ້າຮ່ວມຂອງພວກເຂົາ. ແມ່ຍິງເຮັດວຽກຢູ່ໃນຂົງເຂດວິທະຍາສາດ, ເຕັກໂນໂລຊີ, ວິສາວະກຳ ແລະ ຄະນິດສາດ (STEM) ປະສົບກັບການຂົ່ມເຫັງທາງເພດໃນອັດຕາສູງ, ດ້ວຍການວິໄຈພົບວ່າ 43% ຂອງ STEM ທີ່ເປັນແມ່ຍິງຮຽນຈົບມາ, 50% ຂອງແມ່ຍິງຢູ່ໃນຂົງເຂດວິທະຍາສາດ ແລະ 58% ຂອງແມ່ຍິງຢູ່ໃນສະຖາບັນທີ່ໄດ້ລາຍງານມີການປະສົບກັບການຂົ່ມເຫັງທາງເພດ.[15] ການສຳຫຼວດປີ 2022 ພົບວ່າ 58% ຂອງນັກວິທະຍາສາດທາງດ້ານດິນຟ້າອາກາດແມ່ຍິງຜູ້ທີ່ຖືກຕົກເປັນເປົ້າໝາຍການລ່ວງລະເມີດ ແລະ ການຂົ່ມເຫັງທາງເພດທາງອອນລາຍໄດ້ປະສົບກັບການສູນເສຍປະສິດທິພາບໃນການເຮັດວຽກ, ໂດຍມີ 25% ແມ່ນວຽກເປັນຕາຍ້ານ.[16] ການຈັດການ GBV ແລະ SEAH ຢູ່ພາຍໃນອຸດສາຫະກຳສີຂຽວມີຄວາມຈຳເປັນສຳລັບການເຮັດໃຫ້ແມ່ຍິງ ແລະ ຄົນຫຼາຍຫຼາຍເພດສາມາດສືບຕໍ່ເຮັດວຽກນີ້ໄດ້.

*ເນື່ອງຈາກການລ່ວງລະເມີດ ແລະ ການຂົ່ມເຫັງທາງອອນລາຍ, 41% ຂອງນັກວິທະຍາສາດດິນຟ້າອາກາດແມ່ຍິງກ່າວວ່າພວກເຂົາອາດຈະໂພສລົງສື່ສັງຄົມໜ້ອຍກວ່າ, 33% ອາດຈະປະກອບສ່ວນໃຫ້ສື່ໜ້ອຍລົງ ແລະ 27% ອາດຈະເວົ້າກ່ຽວກັບບັນຫາດິນຟ້າອາກາດຢູ່ໃນສາທາລະນະໜ້ອຍລົງ.[17]*

## ປະເພດ ແລະ ຕົວຂັບເຄື່ອນຂອງ GBV ເພື່ອຈັດການຜ່ານການດຳເນີນການທາງດິນຟ້າອາກາດ

ການເຂົ້າໃຈປະເພດຂອງ GBV ເຊື່ອມໂຍງກັບການປ່ຽນແປງດິນຟ້າອາກາດ ແລະ ການດຳເນີນການທາງດິນຟ້າອາກາດແມ່ນຈຸດລິ່ມຕົ້ນທີ່ຈຳເປັນສຳລັບຜູ້ປະຕິບັດ ແລະ ຜູ້ວາງນະໂຍບາຍໄດ້ໃຫ້ຄຳໝັ້ນສັນຍາຕໍ່ການປັບປຸງຜົນກະທົບ ແລະ ຄວາມມີປະສິດທິພາບຂອງພວກມັນ.[18] ການວິເຄາະສະເພາະສະພາບການມີຄວາມຈຳເປັນເພື່ອເຂົ້າໃຈວ່າການຊ່ວຍເຫຼືອທາງດ້ານດິນຟ້າອາກາດສະເພາະສາມາດຈັດການຄວາມສ່ຽງ ແລະ ຜົນກະທົບ GBV ໄດ້ຢ່າງມີປະສິດທິພາບທີ່ສຸດ.

ປະເພດຂອງ GBV ເຊື່ອມໂຍງກັບການປ່ຽນແປງດິນຟ້າອາກາດ ແລະ ການດຳເນີນການທາງດ້ານດິນຟ້າອາກາດໄດ້ຮັບການລະບຸຜ່ານການຄົ້ນຄວ້າວິໃຈລວມເອົາແຕ່ບໍ່ຈຳກັດຕໍ່:

**ຄວາມຮຸນແຮງຕໍ່ຄູ່ຮັກ (IPV):** ການປ່ຽນແປງດິນຟ້າອາກາດສາມາດເພີ່ມຕົວຂັບເຄື່ອນຄວາມຮຸນແຮງຕໍ່ຄູ່ຮັກໄດ້, ຕົວຢ່າງ: ໂດຍການເພີ່ມຂຶ້ນຂອງຄວາມທຸກຍາກ ແລະ ຄວາມອ່ອນໄຫວ. ບາງຄັ້ງຜູ້ຊາຍໄດ້ກໍ່ທຳ IPV ເປັນຮູບແບບຂອງການຕໍ່ຕ້ານເມື່ອແມ່ຍິງເຂົ້າຮ່ວມໃນໂຄງການດິນຟ້າອາກາດ. ຢູ່ໃນອູການດາ, ໂຄງການປັບປຸງຊີວິດການເປັນຢູ່ໄດ້ສະໜອງງົວໃຫ້ແມ່ຍິງເປັນການດຳລົງຊີວິດທາງເລືອກຕໍ່ການປູກຝັງໃນພື້ນທີ່ວຸ່ມນ້ຳ. ເຖິງແນວໃດກໍຕາມ, ບັນທັດຖານທາງວັດທະນະທຳທີ່ເບິ່ງວ່າງົວເປັນຊັບສົມບັດຂອງຜູ້ຊາຍສຳລັບການຈ່າຍຄ່າສິນສອດໄດ້ນຳໄປສູ່ການເຮັດໃຫ້ຜົວຫຼາຍຄົນລັກເອົາງົວ ແລະ ນຳໃຊ້ພວກມັນໄປແຕ່ງງານເອົາເມຍເພີ່ມ, ເຮັດໃຫ້ແມ່ຍິງຕົກຢູ່ໃນຄວາມສ່ຽງ ແລະ ເປັນບ່ອນທຳລາຍຈຸດມຸ່ງໝາຍຂອງໂຄງການ.

**ຄວາມຮຸນແຮງທາງເພດທີ່ບໍ່ແມ່ນກັບຄູ່ຕົວເອງ:** ຄວາມຮຸນແຮງທາງເພດທີ່ບໍ່ແມ່ນກັບຄູ່ຕົວເອງມັກຈະເພີ່ມຂຶ້ນຫຼັງຈາກໄພພິບັດທີ່ເກີດຈາກການປ່ຽນແປງດິນຟ້າອາກາດ. ຫຼັງຈາກໄພນ້ຳຖ້ວມປີ 2018 ຢູ່ໃນ ສປປ ລາວ, 27% ຂອງຜູ້ຄົນໄດ້ຍິນເລື່ອງ

ຂອງບາງຄົນຖືກຂົ່ມຂືນ.[19] ຜົນກະທົບຮຸນແຮງ ແລະ ໄລຍະຍາວຂອງຄວາມຮຸນແຮງເລື້ອຍໆສາມາດເປັນອຸປະສັກທີ່ສຳຄັນຕໍ່ຄວາມສາມາດຂອງຜູ້ລອດຊີວິດ ແລະ ຄອບຄົວຂອງເຂົາເຈົ້າທີ່ຈະຟື້ນຟູຈາກໄພພິບັດ.

**ການຂູດຮີດ, ການລ່ວງລະເມີດ ແລະ ການຂົ່ມເຫັງທາງເພດ (SEAH):** ເມື່ອພະຍຸໄຊໂຄລນ Freddy ຖະຫຼົ່ມມາລາວີປີ 2023, ແມ່ຍິງຢູ່ໃນແຄ້ມຄົນຖືກຍົກຍ້າຍພາຍໃນ (IDP) ໄດ້ລາຍງານວ່າພວກເຂົາຖືກຂົ່ມເຫັງທາງເພດໂດຍພະນັກງານສົງເຄາະເພື່ອດຳເນີນກິດທາງເພດໃນການແລກປ່ຽນເອົາຄວາມຊ່ວຍເຫຼືອ.[20] ຍັງມີຄວາມສ່ຽງຂອງ SEAH ກ່ຽວຂ້ອງກັບໂຄງການພະລັງງານທົດແທນຂະໜາດໃຫຍ່ ແລະ ພື້ນຖານໂຄງລ່າງສີຂຽວ, ລວມທັງສະຖານທີ່ຫ່າງໄກສອກຫຼີກ, ພະນັກງານຮັກສາຄວາມປອດໄພ, ຄົນງານຊົ່ວຄາວເພດຊາຍ ແລະ ຄົນງານເພດຊາຍທີ່ມີສັນຍາຊົ່ວຄາວ.[21] ຕົວຢ່າງ: ໃນປີ 2015, ໂຄງການພັດທະນາຂະແໜງຂົນສົ່ງ (TSDP) ປະເທດອູການດາທີ່ທະນາຄານໂລກໃຫ້ທຶນໄດ້ສູນເສຍການສະໜອງທຶນຂອງຕົນເອງຫຼັງຈາກການລ່ວງລະເມີດໂດຍຊຸມຊົນບິໂກດີ (Bigodi) ຢູ່ໃນປະເທດອູການດາ (ທີ່ໄດ້ຮັບການໜູນຫຼັງໂດຍການອອກຂ່າວຜ່ານສື່ສາກົນ) ຜູ້ທີ່ຮຽກຮ້ອງໃຫ້ທະນາຄານໂລກຈັດການກໍລະນີຂອງ SEAH ຕໍ່ກັບເດັກຍິງໄວລຸ່ນໂດຍພະນັກງານກໍ່ສ້າງ.[22]

ການແຕ່ງງານເດັກ: ຢູ່ໃນອາຟຣິກາຕາເວັນອອກ,[23] ປະເທດມາລາວີ[24] ແລະ ບັງກະລາເທດ,[25] ອັດຕາການແຕ່ງງານເດັກສູງຂຶ້ນຫຼັງຈາກນໍ້າຖ້ວມທຳລາຍຜົນລະປູກ ແລະ ສະພາບເສດຖະກິດຮ້າຍແຮງຂຶ້ນ. ຢູ່ໃນປະເທດເອທິໂອເປຍ, ການແຕ່ງງານເດັກໄດ້ເພີ່ມຂຶ້ນ 119% ໃນປີ 2022 ປຽບທຽບກັບປີ 2021 ຢູ່ໃນພື້ນທີ່ໄດ້ຮັບຜົນກະທົບຮ້າຍແຮງທີ່ສຸດຈາກໄພແຫ້ງແລ້ງ ແລະ ການຂາດແຄນອາຫານ, ເຊິ່ງສາມາດເຮັດໃຫ້ຮ້າຍແຮງຂຶ້ນໄດ້ໂດຍການປ່ຽນແປງດິນຟ້າອາກາດ.[26] ຢູ່ໃນບັງກະລາເທດ, 45% ຂອງຜູ້ຕອບໄດ້ເຊື່ອມໂຍງການແຕ່ງງານໄວກັບໄພພິບັດທີ່ເກີດຈາກການປ່ຽນແປງດິນຟ້າອາກາດ, ໃນຂະນະທີ່ສະພາບຫຼັງໄພພິບັດຍັງເຮັດໃຫ້ເດັກຍິງຕົກເປັນເຫຍື່ອຄວາມຮຸນແຮງໃນລະດັບສູງເນື່ອງຈາກສິນສອດທີ່ຄ້າງຈ່າຍ.  ການແຕ່ງງານເດັກມີຜົນຕາມມາຮ້າຍແຮງ, ລວມທັງມີການເພີ່ມຂຶ້ນຂອງ IPV, ຄວາມຮຸນແຮງທາງເພດ, ການຈຳກັດຕໍ່ໂອກາດທາງການສຶກສາ ແລະ ເສດຖະກິດ, ການໂດດດ່ຽວ ແລະ ການເອົາໜ່ວຍງານອອກໄປ.  ການແຕ່ງງານເດັກຂັບເຄື່ອນໄປສູ່ຄວາມທຸກຍາກ, ການຈຳກັດຄວາມປອດໄພ ແລະ ຄວາມສາມາດຂອງເດັກຍິງເຕັມໄວ ແລະ ຄອບຄົວຂອງພວກເຂົາທີ່ຈະປັບຕົວຕໍ່ການປ່ຽນແປງດິນຟ້າອາກາດ.

ການຂົ່ມເຫັງ, ການໃຫ້ຂໍ້ມູນຜິດ ແລະ ໄພຂົ່ມຂູ່ຄວາມຮຸນແຮງ: ການສຳຫຼວດຜູ້ປົກປ້ອງສິດທິມະນຸດແມ່ຍິງ 485 ຄົນໃນທົ່ວ 67 ປະເທດພົບວ່າ 1 ໃນ 3 ຄົນໄດ້ປະເຊີນກັບການກ່າວຫາຜິດ ແລະ ການໃຫ້ຂໍ້ມູນຜິດ, ເປັນໄພຂົ່ມຂູ່ຕໍ່ຊື່ສຽງ ແລະ ຄວາມສາມາດຂອງພວກເຂົາທີ່ຈະສືບຕໍ່ວຽກຂອງພວກເຂົາ.[27] ການຄົ້ນຄວ້າວິໄຈຂອງ UN ພົບວ່ານັກເຄື່ອນໄຫວແມ່ຍິງໜຸ່ມ ແລະ ເດັກຍິງ, ລວມທັງບັນດາຜູ້ທີ່ຢູ່ໃນການດຳເນີນການທາງດ້ານສິ່ງແວດລ້ອມແມ່ນຕົກຢູ່ໃນຄວາມສ່ຽງຂອງການລ່ວງລະເມີດ, ການຂົ່ມຂູ່ ແລະ ການໂຈມຕີເທັດທາງອອນລາຍ.[28]

ການຄ້າມະນຸດເພື່ອການຂູດຮີດທາງເພດ, ແຮງງານບັງຄັບ ແລະ ພັນທະ: ການປ່ຽນແປງດິນຟ້າອາກາດກຳລັງເພີ່ມທະວີບັດໃຈຕ່າງໆທີ່ສາມາດຂັບເຄື່ອນການຄ້າມະນຸດ, ລວມທັງການສູນເສຍການດຳລົງຊີວິດ ແລະ ຄວາມທຸກຍາກ.[29] ນອກຈາກນັ້ນ, ຕົວຫຼັກຖານທີ່ກຳລັງເພີ່ມຂຶ້ນເນັ້ນໃຫ້ເຫັນບົດບາດຂອງການປ່ຽນແປງດິນຟ້າອາກາດເປັນຕົວຄູນໄພຂົ່ມຂູ່ສຳລັບແຮງງານເດັກ, ໂດຍສະເພາະໃນພາກກະສິກຳ. ການຄ້າມະນຸດ ແລະ ແຮງງານບັງຄັບກຳລັງປະກອບເປັນສິ່ງທ້າທາຍສຳລັບຊຸມຊົນທີ່ພະຍາຍາມຮັກສາຄວາມສາມາດໃນການກັບຄືນສູ່ສະພາບປົກກະຕິໂດຍໄວຕໍ່ການປ່ຽນແປງດິນຟ້າອາກາດ.

BOX

## GBV ໃນຮູບແບບຂອງການສູນເສຍ ແລະ ຄວາມເສຍຫາຍ

ການສູນເສຍ ແລະ ຄວາມເສຍຫາຍແມ່ນ ‘ຜົນກະທົບດ້ານລົບຂອງການປ່ຽນແປງດິນຟ້າອາກາດທີ່ເກີດຂຶ້ນເຖິງວ່າຈະມີຄວາມພະຍາຍາມໃນການບັນເທົາ ແລະ ການປັບຕົວ .’[30] ຮູບແບບຂອງການສູນເສຍ ແລະ ຄວາມເສຍຫາຍໂດຍທົ່ວໄປມີສອງຮູບແບບຕົ້ນຕໍຄື:

- ດ້ານເສດຖະກິດ - ‘ຜົນກະທົບດ້ານລົບທີ່ສາມາດປະເມີນຕົ້ນທຶນຄວາມເສຍຫາຍໄດ້ເຊັ່ນ: ຄວາມເສຍຫາຍຕໍ່ໂຄງສ່າງພື້ນຖານ ຫຼື ຜົນຜະລິດຂອງຜົນລະປູກຫຼຸດລົງ.’ [31]
- ບໍ່ແມ່ນທາງດ້ານເສດຖະກິດ - ‘ຜົນກະທົບດ້ານລົບທີ່ບໍ່ສາມາດຊື້ຂາຍໄດ້ຢ່າງງ່າຍດາຍໃນຕະຫຼາດ ແລະ ໂດຍປົກກະຕິແລ້ວແມ່ນຍາກທີ່ຈະວັດແທກໄດ້ໂດຍຮູບແບບຂອງເງິນເຊັ່ນ: ການສູນເສຍວັດທະນະທຳ, ການອົບພະຍົບ ແລະ ວິຖີຊີວິດ. ສິ່ງເຫຼົ່ານີ້ມີແນວໂນ້ມທີ່ຈະແກ້ໄຂບໍ່ໄດ້ ແລະ ບໍ່ສາມາດຍ້ອນກັບໄດ້.’[32]

ຜົນກະທົບຂອງການປ່ຽນແປງດິນຟ້າອາກາດໃນການຂັບເຄື່ອນ GBV ໃນລະດັບທີ່ສູງຂຶ້ນແມ່ນໄດ້ຮັບການເນັ້ນໜັກໂດຍຜູ້ສະໜັບສະໜູນສິດທິແມ່ຍິງວ່າເປັນຮູບແບບຂອງການສູນເສຍ ແລະ ຄວາມເສຍຫາຍທີ່ບໍ່ແມ່ນທາງດ້ານເສດຖະກິດ.[33] ການສຶກສາກ່ຽວກັບວິທີການທີ່ແມ່ຍິງ ແລະ ເດັກນ້ອຍໄດ້ປະສົບກັບການສູນເສຍ ແລະ ຄວາມເສຍຫາຍໃນບັງກະລາເທດ, ຟິຈິ, ວານົວຕູພົບວ່າສຸຂະພາບຈິດຂອງແມ່ຍິງ ແລະ ເດັກນ້ອຍໄດ້ຮັບຜົນກະທົບດ້ານລົບ, ການເຄື່ອນໄຫວຂອງພວກເຂົາຖືກຈຳກັດ ແລະ ປະສົບການຂອງເຂົາເຈົ້າກ່ຽວກັບການລ່ວງລະເມີດທາງເພດ, ຄວາມຮຸນແຮງໃນຄອບຄົວ, ການສະແຫວງຫາຜົນປະໂຫຍດ ແລະ ການຄ້າມະນຸດເພີ່ມຂຶ້ນອັນເນື່ອງມາຈາກຜົນກະທົບຂອງການປ່ຽນແປງດິນຟ້າອາກາດ..<[34]

ຢູ່ທີ່ COP28 ໃນປີ 2023, ກອງທຶນເພື່ອຕອບສະໜອງຕໍ່ກັບການສູນເສຍ ແລະ ຄວາມເສຍຫາຍ (Fund for Responding to Loss and Damage) ໄດ້ດຳເນີນການເພື່ອໃຫ້ເງິນທຶນແກ່ປະເທດກຳລັງພັດທະນາ (ດັ່ງທີ່ໄດ້ນິຍາມໂດຍ UNFCCC), ໂດຍສະເພາະແມ່ນປະເທດທີ່ມີຄວາມສ່ຽງຕໍ່ກັບຜົນກະທົບດ້ານລົບຂອງການປ່ຽນແປງດິນຟ້າອາກາດ.[35] ເນື່ອງຈາກວ່າການໃຫ້ທຶນໃນຮູບແບບນີ້ມີຄວາມໂດດເດັ່ນ ແລະ ມີຂະໜາດໃຫຍ່ຂຶ້ນ, ມັນເປັນສິ່ງທີ່ສຳຄັນສຳລັບຜູ້ບໍລິຈາກ ແລະ ລັດຖະບານໃນການຮ່ວມມືກັນຮອບຮວມເອົາຂໍ້ມູນກ່ຽວກັບຄວາມເທົ່າທຽມທາງເພດ, ຄວາມພິການ ແລະ ການມີສ່ວນຮ່ວມທາງສັງຄົມ (GEDSI), ລວມທັງ GBV, ເພື່ອຄຳນວນວ່າອັນໃດເປັນການສູນເສຍ ແລະ ຄວາມເສຍຫາຍ.

*ການປ່ຽນແປງດິນຟ້າອາກາດທີ່ເປັນຕົວຂັບເຄື່ອນ GBV ແມ່ນຮູບແບບຫຼັກຂອງການສູນເສຍ ແລະ ຄວາມເສຍຫາຍທີ່ບໍ່ແມ່ນທາງດ້ານເສດຖະກິດ, ທີ່ຍັງບໍ່ປາກົດໃນການເຈລະຈາເລື່ອງການສູນເສຍ ແລະ ຄວາມເສຍຫາຍມາຈົນຮອດປັດຈຸບັນ.*

## ສິ່ງທີ່ເຮັດວຽກເພື່ອຈັດການ GBV ໃນການດຳເນີນການກ່ຽວກັບການດິນຟ້າອາກາດ

ບົດຄົ້ນຄວ້ານີ້ລະບຸຊ່ອງຫວ່າງທີ່ສຳຄັນໃນການປະເມີນຜົນໃນໂຄງການດຳເນີນການດ້ານດິນຟ້າອາກາດໃນໄລຍະຍາວທີ່ໄດ້ຮັບການປະເມີນຢ່າງເຂັ້ມງວດທີ່ໄດ້ຖືກອອກແບບມາເພື່ອແກ້ໄຂ GBV ໃນຖານະເປັນສ່ວນໜຶ່ງຂອງຂອບເຂດຂອງພວກມັນ. ນີ້ແມ່ນຂົງເຂດສຳຄັນສຳລັບການສຳຫຼວດ ແລະ ການລົງທຶນໃນອະນາຄົດ, ຈຳ ເປັນສຳລັບການພັດທະນາການດຳເນີນການດ້ານດິນຟ້າອາກາດທີ່ຄອບຄຸມ ແລະ ອີງມາຈາກຫຼັກຖານຫຼາຍຂຶ້ນ.

ຕາຕະລາງນີ້ເນັ້ນໃຫ້ເຫັນ ວ່າວ່າຍ່ອນຫຍັງມັນຈຶ່ງສຳຄັນໃນການຈັດການ GBVໃນການດຳເນີນການດ້ານດິນຟ້າອາກາດຈຶ່ງມີຄວາມສຳຄັນ ແລະ ສະຫຼຸບກົນລະຍຸດຕົ້ນຕໍບາງຢ່າງທີ່ອາດຈະໄດ້ຜົນໃນການບັນລຸສິ່ງນີ້.

ສີ່ຂົງເຂດຕົ້ນ ຕໍຂອງການດຳເນີນການດ້ານດິນຟ້າອາກາດທີ່ໄດ້ຮັບການຄຸ້ມຄອງມີຄື:

1. ການປັບຕົວ ແລະ ຄວາມສາມາດກັບຄືນມາສູ່ປົກກະຕິໂດຍໄວ
2. ການຕອບໂຕ້ໄພພິບັດທີ່ເກີດຈາກການປ່ຽນແປງດິນຟ້າອາກາດ
3. ການຫັນປ່ຽນໄປສູ່ເສດຖະກິດຄາບອນຕ່ຳ
4. ການເຄື່ອນໄຫວທາງດິນຟ້າອາກາດ ແລະ ສິ່ງແວດລ້ອມ



ຜ່ານການສໍາພາດຜູ້ໃຫ້ຂໍ້ມູນຫຼັກ ແລະ ການທົບທວນເອກະສານ, ພວກເຮົາພົບຕົວຢ່າງແນວທາງການປະຕິບັດໃໝ່ທີ່ໜ້າສົນໃຈໃນການປ້ອງກັນ ແລະ ຕອບໂຕ້ກັບ GBV ໃນການດໍາເນີນການດ້ານດິນຟ້າອາກາດດັ່ງຕໍ່ໄປນີ້:

**ການລວມເອົາການປ້ອງກັນ ແລະ ການຕອບໂຕ້ GBV ເຂົ້າໃນນະໂຍບາຍ ແລະ ການເງິນຂອງການປ່ຽນແປງດິນຟ້າອາກາດ.** ນະໂຍບາຍສາກົນ ແລະ ພາຍໃນປະເທດສາມາດນໍາມາໃຊ້ເພື່ອລະບຸວ່າການປ່ຽນແປງຂອງດິນຟ້າອາກາດສາມາດຂັບເຄື່ອນ GBV ໄດ້ແນວໃດ ແລະ GBV ສາມາດທໍາລາຍການປະຕິບັດດ້ານດິນຟ້າອາກາດແນວໃດ ແລະ ກໍານົດຂໍ້ສະເໜີ ແລະ ຈຸດປະສົງເພື່ອຊ່ວຍຂັບເຄື່ອນຄວາມສອດຄ່ອງຂອງນະໂຍບາຍ ແລະ ຊັບພະຍາກອນເຂົ້າໃນການປ້ອງກັນ ແລະ ຕອບໂຕ້ມັນ. ຕົວຢ່າງ: ສາທາລະນະລັດເກາະມາຊໍ (RMI) ໄດ້ໃຫ້ຄວາມສໍາຄັນຂອງການປ້ອງກັນ GBV ເປັນສ່ວນໜຶ່ງຂອງງການປະກອບສ່ວນທີ່ໄດ້ກໍານົດໃນລະດັບຊາດ (NDC) ຂອງເຂົາເຈົ້າໃນຂໍ້ຕົກລົງປາຣີ.36 ແຜນການປັບຕົວລະດັບຊາດ (NAP) ຂອງຊູຣິນາເມະຮຽກຮ້ອງໃຫ້ມີການຝຶກອົບຮົມກ່ຽວກັບ GBV ໃຫ້ແກ່ອາສາສະໝັກໃນການຕອບໂຕ້ກັບໄພພິບັດ ແລະ NAP ຂອງຄໍສຕາຣິກາ... ຂອງຄີຣິບາຕິສະແຫວງຫາການປັບປຸງຫຼັກຖານໂດຍອີງຕາມການເຊື່ອມໂຍງລະຫວ່າງ GBV ແລະ ການປ່ຽນແປງດິນຟ້າອາກາດ.[37] GBV ຍັງສາມາດລວມເຂົ້າສູ່ການເງິນເພື່ອດິນຟ້າອາກາດ, ສໍາລັບການປັບຕົວ, ການບັນເທົາຜົນກະທົບ ແລະ ການສູນເສຍ ແລະ ຄວາມເສຍຫາຍ, ແຕ່ການຄາດການໃນປັດຈຸບັນແນະນໍາວ່າສິ່ງນີ້ເປັນພຽງສ່ວນເລັກນ້ອຍຂອງການເງິນເພື່ອດິນຟ້າອາກາດທັງໝົດຈົນຮອດປັດຈຸບັນ.

*ການຄາດຄະເນໃນປັດຈຸບັນແນະນໍາວ່າການຈັດການ GBV ຍັງເປັນພຽງສ່ວນເລັກນ້ອຍຂອງການເງິນເພື່ອດິນຟ້າອາກາດທັງໝົດ. ຕົວຢ່າງ: ການວິເຄາະການເງິນເພື່ອດິນຟ້າອາກາດຈໍານວນ US$12.7 ຕື້ ໄດ້ຖືກຈັດສັນໃຫ້ປະເທດຮາວັນດາໃນລະຫວ່າງປີ 2013 ຫາ 2022 ສະແດງໃຫ້ເຫັນວ່າມີພຽງແຕ່ການຊ່ວຍເຫຼືອຈໍານວນ 0.01% ເທົ່ານັ້ນທີ່ກ່ຽວຂ້ອງກັບຈຸດປະສົງຂອງ GBV.[38]*

**ການລວມການວິເຄາະຄວາມເທົ່າທຽມທາງເພດ, ຄວາມພິການ ແລະ ການມີສ່ວນຮ່ວມໃນສັງຄົມຢູ່ໃນການອອກແບບ ແລະ ການປະເມີນຜົນຂອງແຜນງານ ແລະ ໂຄງການ.** ການປັບຕົວເຂົ້າກັບສະພາບອາກາດ, ການບັນເທົາທຸກ, ການກຽມຄວາມພ້ອມ ແລະ ການຕອບໂຕ້ໄພພິບັດ ແລະ ການຊ່ວຍເຫຼືອການສູນເສຍ ແລະ ຄວາມເສຍຫາຍແມ່ນປອດໄພກວ່າ ແລະ ມີປະສິດທິພາບຫຼາຍຂຶ້ນເມື່ອອີງໃສ່ຄວາມເຂົ້າໃຈສະເພາະສະພາບການກ່ຽວກັບຄວາມສ່ຽງ ແລະ ຜົນກະທົບຂອງ GBV, ຮັບປະກັນວ່າພວກມັນຖືກສ້າງຕັ້ງຂຶ້ນໃນລັກສະນະທີ່ຄາດຄະເນ ແລະ ຕອບສະໜອງຕໍ່ສິ່ງທ້າທາຍເຫຼົ່ານີ້. ຕົວຢ່າງ: ການຈັດການກັບຄວາມສ່ຽງດ້ານໄພພິບັດ (DRM) ຂອງ Oxfam Cambodia ເຮັດວຽກຮ່ວມກັບຊຸມຊົນທີ່ມີຄວາມສ່ຽງຕໍ່ໄພນໍ້າຖ້ວມລວມມີການລວມເອົາການວາງແຜນ ແລະ ການຮັບມືກັບ GBV ເຂົ້າໃນການຝຶກຊ້ອມການຈໍາລອງ DRM.39 ໃນເນປານ, ໂຄງການ Hariyo Ban ສຸມໃສ່ການສະໜັບສະໜູນການເປັນຜູ້ນໍາຂອງແມ່ຍິງໃນການຈັດການຊັບພະຍາກອນທໍາມະຊາດທີ່ຍືນຍົງ. ມັນລະບຸວ່າ GBV ເປັນອຸປະສັກທີ່ສໍາຄັນຕໍ່ການມີສ່ວນຮ່ວມຂອງແມ່ຍິງ ແລະ ພະຍາຍາມທີ່ຈະຈັດການບັນຫານີ້ໂດຍການໃຫ້ຜູ້ຊາຍ ແລະ ເດັກນ້ອຍມີສ່ວນຮ່ວມໃນຖານະເປັນຜູ້ນໍາດ້ານຄວາມເທົ່າທຽມ ແລະ ການມີສ່ວນຮ່ວມໃນສັງຄົມ.40 ການຈັດການ GBV

ຄວນຖືກລວມເຂົ້າໃນກອບວຽກການຕິດຕາມ, ການປະເມີນຜົນ ແລະ ການຮຽນຮູ້ກອບວຽກເພື່ອສະໜັບສະໜູນຄວາມຮັບຜິດຊອບ ແລະ ການປະຕິບັດທີ່ດີທີ່ສຸດ. ການເອົາການຕອບສະໜອງຕໍ່ GBV ເຂົ້າໃນການຊ່ວຍເຫຼືອດ້ານດິນຟ້າອາກາດຫຼຸດຜ່ອນຄວາມສ່ຽງຂອງຜົນກະທົບຂອງ GBV ເປັນບ່ອນທຳລາຍເປົ້າໝາຍຂອງກິດຈະກຳ.

## ການຈັດການ GBV ເພື່ອປັບປຸງການມີສ່ວນຮ່ວມຂອງແມ່ຍິງໃນການປົກປ້ອງປ່າຊາຍເລນຂອງອິນໂດເນເຊຍ.

ໃນອິນໂດເນເຊຍ, ຜູ້ຍິງໃນຊຸມຊົນໄດ້ຮັບຜົນກະທົບຈາກການເຊື່ອມໂຊມຂອງສິ່ງແວດລ້ອມປະສົບກັບຄວາມຮຸນແຮງທາງເພດໃນສັງຄົມ (GBV), ລວມທັງຄວາມຮຸນແຮງຈາກຄູ່ຮັກ, ການຄ້າມະນຸດ ແລະ ຄວາມຮຸນແຮງຈາກອົງການຈັດຕັ້ງຂ້າມຊາດ, ລວມເຖິງໄພຂົ່ມຂູ່ເຖິງຊີວິດ. ມູນນິທິ Srikandi Lestari ເຮັດວຽກເພື່ອສະໜັບສະໜູນການຕໍ່ຕ້ານການເຊື່ອມໂຊມຂອງສິ່ງແວດລ້ອມ, ແລະ ສະໜັບສະໜູນຊີວິດການເປັນຢູ່ ແລະ ການມີສ່ວນຮ່ວມຂອງແມ່ຍິງໃນຄວາມພະຍາຍາມອະນຸລັກ.

### GBV ມີຜົນກະທົບຕໍ່ວຽກງານຂອງເຂົາເຈົ້າແນວໃດ:

ພາຍໃນຊຸມຊົນ, GBV ຂັດຂວາງບໍ່ໃຫ້ແມ່ຍິງຫຼາຍຄົນເຂົ້າຮ່ວມກິດຈະກໍາຂອງໂຄງການ, ໂດຍການຂັດຂວາງຄວາມສາມາດໃນການສ້າງຄວາມຍືດຍຸ່ນຕໍ່ກັບການເສື່ອມໂຊມຂອງສິ່ງແວດລ້ອມ ແລະ ປະກອບສ່ວນເຂົ້າໃນກິດຈະກໍາຟື້ນຟູ, ເຮັດໃຫ້ໂຄງການມີປະສິດທິພາບໜ້ອຍລົງ. ນອກຈາກນັ້ນ, GBV ຕໍ່ຕ້ານພະນັກງານ ແລະ ນັກເຄື່ອນໄຫວຍັງເຮັດໃຫ້ຄວາມສາມາດຂອງອົງກອນໃນການເຮັດວຽກຢ່າງມີປະສິດທິພາບຫຼຸດລົງ.

### ວິທີການທີ່ໂຄງການຈັດການຄວາມຮຸນແຮງທາງເພດ (GBV):

- **ການຝຶກອົບຮົມກົດໝາຍ ແລະ ສິດທິ:** ມູນນິທິສຶກສາອົບຮົມແມ່ຍິງ, ຜູ້ຊາຍ, ແລະ ຊາວປະມົງກ່ຽວກັບສິດທິທາງກົດໝາຍຂອງເຂົາເຈົ້າໃນການປະເຊີນກັບການເສື່ອມໂຊມຂອງສິ່ງແວດລ້ອມ, ຄວາມຮຸນແຮງ ແລະ GBV. ພວກເຂົາໃຫ້ການຊ່ວຍເຫຼືອທາງດ້ານກົດໝາຍແກ່ແມ່ຍິງທີ່ປະສົບກັບ GBV, ຮັບປະກັນວ່າຄະດີຂອງເຂົາເຈົ້າໄດ້ຮັບການຈັດການຢ່າງເໝາະສົມ.
- **ກອງປະຊຸມ:** ມູນນິທິຈັດກອງປະຊຸມບ່ອນທີ່ແມ່ຍິງ ແລະ ນັກກົດໝາຍມາຮ່ວມກັນເພື່ອປຶກສາຫາລືກ່ຽວກັບສິດທິ GBV, ການປ່ຽນແປງຂອງດິນຟ້າອາກາດ ແລະ ຜົນກະທົບຕໍ່ສຸຂະພາບ. ການຝຶກອົບຮົມນີ້ຊ່ວຍສ້າງຄວາມຮັບຮູ້ ແລະ ໃຫ້ຜູ້ເຂົ້າຮ່ວມມີຄວາມຮູ້ກ່ຽວກັບການແກ້ໄຂບັນຫາເຫຼົ່ານີ້, ສົ່ງເສີມ ແລະ ເສີມສ້າງຄວາມສາມາດກັບຄືນສູ່ສະພາບເດີມໄດ້ໂດຍໄວ ແລະ ຄວາມເປັນຜູ້ນໍາໃນຊຸມຊົນຂອງເຂົາເຈົ້າ.
- **ການຊ່ວຍເຫຼືອສຸຂະພາບຈິດເບື້ອງຕົ້ນ:** ມູນນິທິສະເໜີໃຫ້ການປະຖົມພະຍາບານສຸຂະພາບຈິດໃຫ້ແກ່ຜູ້ລອດຊີວິດຈາກ GBV ພ້ອມກັບຄວາມສາມັກຄີຜ່ານການເຊື່ອມຕໍ່ຜູ້ລອດຊີວິດທີ່ມີປະສົບການທີ່ຄ້າຍຄືກັນ.
- **ທີ່ພັກພິງ:** ກ່ອນໜ້ານີ້, ມູນນິທິໄດ້ສະເໜີທີ່ພັກອາໄສໃຫ້ແກ່ແມ່ຍິງທີ່ເຮັດວຽກກັບເຂົາເຈົ້າ, ຜູ້ທີ່ເຄີຍປະສົບກັບ GBV ແລະ ຕ້ອງການພື້ນທີ່ປອດໄພໃນການພັກເຊົາ.
- **ການມີສ່ວນຮ່ວມກັບອົງການສິດທິມະນຸດສາກົນ:** ມູນນິທິຕິດຕໍ່ກັບອົງການສິດທິມະນຸດສາກົນທີ່ຕິດຕາມກວດກາຄວາມສ່ຽງ GBV ທີ່ພວກເຂົາກໍາລັງປະເຊີນຢູ່ ເພື່ອໃຫ້ພວກເຂົາສາມາດຕອບສະໜອງໄດ້, ຖ້າພະນັກງານຂອງມູນນິທິໄດ້ຮັບບາດເຈັບ.

### ສິ່ງທ້າທາຍ:

- ຄວາມກັງວົນດ້ານຄວາມປອດໄພ: ມູນນິທິປະເຊີນກັບໄພຂົ່ມຂູ່ທີ່ສໍາຄັນຕໍ່ຄວາມປອດໄພຂອງພະນັກງານ, ແລະ ຕ້ອງການການສະໜັບສະໜູນເພີ່ມຂຶ້ນຈາກອົງການອື່ນໆ ແລະ ອົງການພາຍໃນເພື່ອຈັດການອັນຕະລາຍເຫຼົ່ານີ້.

→ ການຕໍ່ຕ້ານຈາກຊຸມຊົນ: ບາງຄັ້ງ, ຜົວຄັດຄ້ານເມຍຂອງເຂົາເຈົ້າທີ່ເຂົ້າຮ່ວມກິດຈະກໍາຕ່າງໆ. ໃນກໍລະນີເຫຼົ່ານີ້, ມູນນິທິໄດ້ພົວພັນໂດຍກົງກັບຜູ້ຊາຍ, ໂດຍສະເພາະຜ່ານກຸ່ມຜູ້ຊາຍ/ຊຸມຊົນເພື່ອອະທິບາຍຈຸດປະສົງຂອງໂຄງການ ແລະ ວິທີການທີ່ໂຄງການນີ້ຈະເປັນປະໂຫຍດຕໍ່ຊຸມຊົນທັງໝົດ.

*ແຫຼ່ງຂໍ້ມູນ: ຫຍໍ້ມາຈາກການສໍາພາດກັບ Dewi ແລະ Mimi ຈາກມູນນິທິ Srikandi Lestari, ອິນໂດເນເຊຍ*

**ການເຮັດວຽກຮ່ວມກັບຜູ້ຊ່ຽວຊານດ້ານ GBV ໃນທ້ອງຖິ່ນ ແລະ ຊົນເຜົ່າພື້ນເມືອງ, ກຸ່ມຜູ້ລອດຊີວິດ, ແລະ ອົງການສິດທິແມ່ຍິງ.**[41] ກຸ່ມທ້ອງຖິ່ນສາມາດຊ່ວຍຮັບປະກັນວ່ານະໂຍບາຍ ແລະ ໂຄງການຕ່າງໆແມ່ນຂຶ້ນກັບສະພາບການສະເພາະ ແລະ ມີການສະໜັບສະໜູນ ແລະ ຄວາມເປັນເຈົ້າຂອງໃນຊຸມຊົນຕໍ່ເປົ້າໝາຍ GBV ແລະ ຈຸດປະສົງດ້ານດິນຟ້າອາກາດ. ຕົວຢ່າງ: ໃນໂຊມາເລຍ, ອົງການດໍາເນີນການສໍາລັບຄວາມກ້າວໜ້າຂອງແມ່ຍິງ ແລະ ເດັກນ້ອຍ (AWCC), ໄດ້ຮ່ວມມືກັບກຸ່ມແມ່ຍິງເພື່ອເຊື່ອມໂຍງການປ້ອງກັນ GBV ເຂົ້າໃນແຜນການຄວາມສາມາດກັບຄືນມາສູ່ສະພາບເດີມໂດຍໄວໃນດ້ານດິນຟ້າອາກາດຂອງຊຸມຊົນ.42 ແມ່ຍິງໄດ້ຮັບການສະໜັບສະໜູນໃຫ້ມີສ່ວນຮ່ວມໃນການອອກແບບ ແລະ ການວາງແຜນຜ່ານຄະນະກໍາມະການ ແລະ ການສົນທະນາ ແລະ ໃນການຈັດຕັ້ງປະຕິບັດ ແລະ ການປະເມີນຜົນກິດຈະກໍາຕ່າງໆ. ໂຄງການໄດ້ໃຫ້ຄວາມສໍາຄັນກັບຄວາມປອດໄພ ແລະ ສະຫວັດດີພາບຂອງແມ່ຍິງ ແລະ ວາງມາດຕະການເພື່ອຫຼຸດຜ່ອນຄວາມສ່ຽງ GBV ທີ່ກ່ຽວຂ້ອງກັບການເຂົ້າຮ່ວມ.

**ເມື່ອພິຈາລະນາຄວາມຕ້ອງການສະເພາະຂອງກຸ່ມທີ່ປະສົບກັບການຖືກກີດກັນຫຼາຍຮູບແບບ.** ກຸ່ມທີ່ຖືກກີດກັນປະເຊີນໜ້າກັບຄວາມສ່ຽງເພີ່ມເຕີມ ແລະ ຊັບຊ້ອນຫຼາຍຂຶ້ນຂອງ GBV ແລະ ຕ້ອງການການຊ່ວຍເຫຼືອໃນລັກສະນະສະເພາະເພື່ອຮັບປະກັນການຕອບໂຕ້ GBV ທີ່ມີປະສິດທິພາບ. ນີ້ລວມມີຄົນພິການ, ຄົນຫຼາກຫຼາຍເພດ ແລະ LGBTQIA+, ກຸ່ມຊົນເຜົ່າພື້ນເມືອງ, ກຸ່ມຊົນເຜົ່າສ່ວນນ້ອຍ, ຄົນຈາກພື້ນຖານການຍ້າຍຖິ່ນຖານ ແລະ ຜູ້ລີ້ໄພ, ແມ່ຍິງຜູ້ສູງອາຍຸ, ແລະ ເດັກຍິງທີ່ເປັນໄວລຸ່ນ. ການສໍາພາດກັບຜູ້ປະຕິບັດຈາກໂຄງການແມ່ຍິງໜຸ່ມ (YouWin) ໃນປະເທດຟີລິບປິນ, ໄດ້ເນັ້ນໃຫ້ເຫັນວ່າກຸ່ມຕິດຕາມ GBV ຂອງພວກເຂົາ, ເຊິ່ງມີຈຸດປະສົງເພື່ອເສີມສ້າງກົນໄກການຕອບໂຕ້ GBV, ຝຶກອົບຮົມກຸ່ມແມ່ຍິງ ແລະ ເດັກຍິງ, ລວມທັງສະມາຊິກຂອງຊຸມຊົນ LGBTQIA+, ຜູ້ທີ່ມີຄວາມພິການ ແລະ ຜູ້ທີ່ເປັນທັງຊົນເຜົ່າພື້ນເມືອງ ແລະ ບໍ່ແມ່ນຊົນເຜົ່າພື້ນເມືອງ ເພື່ອຮັບປະກັນຄວາມພະຍາຍາມຂອງພວກເຂົາຖືກປັບແຕ່ງໃຫ້ເໝາະສົມກັບຄວາມຕ້ອງການຂອງຄົນທີ່ມີຄວາມຫຼາກຫຼາຍພາຍໃນຊຸມຊົນ. ໃນປະເທດຫວຽດນາມ, ສູນພັດທະນາຊົນນະບົດໄດ້ສ້າງຕັ້ງກຸ່ມສໍາລັບເດັກພິການເພື່ອຮັບປະກັນວ່າເດັກເຫຼົ່ານີ້ ແລະ ຜູ້ດູແລຂອງພວກເຂົາສາມາດເຂົ້າເຖິງຂໍ້ມູນກ່ຽວກັບຜົນກະທົບຂອງດິນຟ້າອາກາດ, ເນື່ອງຈາກພວກເຂົາມັກຖືກຍົກເວັ້ນຈາກກຸ່ມຊຸມຊົນຫຼັກຍ້ອນຂໍ້ຫ້າມ ແລະ ການຕໍ່ຕ້ານຈາກພໍ່/ຜົວ.[43]

**ການທ້າທາຍບັນທັດຖານທາງສັງຄົມທີ່ເປັນອັນຕະລາຍທີ່ເຮັດໃຫ້ຄວາມຮຸນແຮງເປັນເລື່ອງປົກກະຕິ.** ໃນປະເທດກໍາປູເຈຍ, ສູນຝຶກອົບຮົມປ່າໄມ້ຊຸມຊົນໃນພາກພື້ນ (RECOFTC) ແລະ ບົດບາດທາງເພດ ແລະ ການພັດທະນາເພື່ອກໍາປູເຈຍ (GADC) ສະໜັບສະໜູນການມີສ່ວນຮ່ວມຂອງແມ່ຍິງໃນພື້ນທີ່ປົກປ້ອງຊຸມຊົນ ແລະ ການຄຸ້ມຄອງປ່າໄມ້ໂດຍການແກ້ໄຂບັນຫາມາດຕະຖານທາງສັງຄົມທີ່ເປັນອັນຕະລາຍທີ່ຊຸກຍູ້ໃຫ້ຜູ້ຊາຍກະທໍາຄວາມຮຸນແຮງ. ໂຄງການນີ້ສົ່ງເສີມໃຫ້ຜູ້ຊາຍ ແລະ ເດັກຊາຍມີສ່ວນຮ່ວມເພື່ອທ້າທາຍທັດສະນະຄະຕິທີ່ເປັນອັນຕະລາຍກ່ຽວກັບການມີສ່ວນຮ່ວມຂອງແມ່ຍິງໃນການປົກປ້ອງສິ່ງແວດລ້ອມ ແລະ ປ່ຽນແປງມາດຕະຖານທາງສັງຄົມ ແລະ ພຶດຕິກໍາທີ່ເປັນອັນຕະລາຍຈາກສາມີ ແລະ ຜູ້ນໍາຜູ້ຊາຍ. ໃນປະເທດເຄນຍາ, ສະມາຄົມອະນຸລັກສັດປ່າເຄນຍາ (KWCA) ແລະ ສະມາຄົມອະນຸລັກສັດປ່າ (TTWCA) ກໍາລັງເຮັດວຽກຮ່ວມກັນເພື່ອສະໜັບສະໜູນແມ່ຍິງໃຫ້ມີສ່ວນຮ່ວມຢ່າງມີຄວາມໝາຍ ແລະ ປອດໄພໃນການລິເລີ່ມອະນຸລັກ ແລະ ສິ່ງແວດລ້ອມ. ໂຄງການຂອງເຂົາເຈົ້າທ້າທາຍມາດຕະຖານທາງສັງຄົມທີ່ເປັນອັນຕະລາຍ ແລະ

ປັບປຸງຄວາມສາມາດຂອງຄູ່ຮ່ວມງານໃນການແກ້ໄຂ GBV ພາຍໃນໂຄງການ ແລະ ຄວາມພະຍາຍາມອະນຸລັກຂອງເຂົາເຈົ້າ.[44] ສິ່ງນີ້ລວມເຖິງຄວາມພະຍາຍາມເພື່ອປ້ອງກັນຄວາມຮຸນແຮງຈາກຄູ່ຮັກ ແລະ ຄວາມຮຸນແຮງທາງເພດທັງທາງຮ່າງກາຍ ແລະ ຈິດໃຈທີ່ບໍ່ແມ່ນຄູ່ຮັກ, ທີ່ເຈົ້າໜ້າທີ່ປ່າໄມ້ຍິງທີ່ເຮັດວຽກເພື່ອຈັດການ ແລະ ປົກປ້ອງປ່າໄມ້ຕ້ອງປະເຊີນຫຼາຍຂຶ້ນ. ມັນຍັງປະກອບມີຄວາມພະຍາຍາມໃນການສະໜັບສະໜູນພັນທະມິດຊາຍ (ຜູ້ຊາຍໃນຊຸມຊົນທີ່ມຸ່ງໝັ້ນທີ່ຈະສະໜັບສະໜູນຄວາມສະເໝີພາບລະຫວ່າງຍິງຊາຍ), ຜູ້ທີ່ມັກຈະປະເຊີນກັບການດູຖູກທາງຄຳເວົ້າໃນການ ສະໜັບສະໜູນການມີສ່ວນຮ່ວມຂອງແມ່ຍິງໃນພື້ນທີ່ເຫຼົ່ານີ້. ການຫຼຸດຜ່ອນອຸປະສັກຕໍ່ການມີສ່ວນຮ່ວມຂອງແມ່ຍິງໃນການດຳເນີນການດ້ານດິນຟ້າອາກາດສາມາດສະໜັບສະໜູນຜົນໄດ້ຮັບດ້ານສະພາບອາກາດທີ່ດີຂຶ້ນໂດຍຜ່ານການມີສ່ວນຮ່ວມ ແລະ ການຕັດສິນໃຈທີ່ເພີ່ມຂຶ້ນຂອງເຂົາເຈົ້າໃນການຊ່ວຍເຫຼືອ.

**ການຮັບປະກັນວ່າການບໍລິການ GBV ໄດ້ຮັບການຈັດໃຫ້ຮ່ວມກັບຄວາມພະຍາຍາມໃນການຕອບໂຕ້ໄພພິບັດ.** ການສຳພາດຜູ້ປະຕິບັດງານດ້ານ GBV ແລະ ການປ່ຽນແປງດິນຟ້າອາກາດໄດ້ເນັ້ນໜັກເຖິງຄວາມສຳຄັນຂອງການບໍ່ແບ່ງແຍກຄວາມພະຍາຍາມໃນການຕອບໂຕ້ GBV ແລະ ໄພພິບັດ. ຜູ້ປະຕິບັດງານດ້ານ GBV ຢູ່ໃນຕຳແໜ່ງທີ່ດີທີ່ຈະລະບຸ ແລະ ຊ່ວຍເຊື່ອມໂຍງຜູ້ກະທຳດ້ານດິນຟ້າອາກາດເຂົ້າກັບການບໍລິການທີ່ມີຢູ່ແລ້ວ (ລວມທັງການດູແລສຸຂະພາບ, ການສະໜັບສະໜູນດ້ານຈິດຕະສັງຄົມ, ການບັງຄັບໃຊ້ກົດໝາຍ ແລະ ຄວາມຍຸຕິທຳ) ແລະ ເພື່ອສະໜັບສະໜູນຜູ້ກະທຳດ້ານດິນຟ້າອາກາດໃນການພັດທະນາການບໍລິການທີ່ມີປະສິດທິພາບ ແລະ ເປັນສູນກາງຜູ້ລອດຊີວິດເພື່ອເຕີມເຕັມຊ່ອງຫວ່າງ. ຕົວຢ່າງ, ສະຫະພັນວາງແຜນຄອບຄົວສາກົນ (IPPF) ໄດ້ເຮັດວຽກຮ່ວມກັບຫຼາຍໜ່ວຍງານ ແລະ ອົງການຈັດຕັ້ງທີ່ກ່ຽວຂ້ອງກັບການຕອບໂຕ້ໄພພິບັດໃນປະເທດຟິຈິເພື່ອດຳເນີນການຝຶກຊ້ອມການຈຳລອງສຸຂະພາບຈະເລີນພັນທາງເພດ (SRH) ສຳລັບເຫດສຸກເສີນ, ເຊິ່ງລວມທັງການຕອບສະໜອງ GBV.[45] ເຊັ່ນດຽວກັນ, ຜູ້ປະຕິບັດການປ່ຽນແປງສະພາບອາກາດສາມາດສະໜັບສະໜູນຜູ້ປະຕິບັດ GBV ໃນການເຊື່ອມໂຍງຄວາມສ່ຽງ ແລະ ໂອກາດການປ່ຽນແປງສະພາບອາກາດເຂົ້າໃນວຽກງານຂອງເຂົາເຈົ້າ. ຜູ້ປະຕິບັດງານ GBV ຄວນຮັບປະກັນວ່າຄວາມພະຍາຍາມຕອບສະໜອງ GBV ໃນສະພາບການໄພພິບັດທີ່ເກີດຈາກສະພາບດິນຟ້າອາກາດແມ່ນສອດຄ່ອງກັບ มາດຕະຖານຂັ້ນຕ່ຳລະຫວ່າງອົງການ 16 ຂໍ້ສຳລັບ GBV ໃນໂຄງການສຸກເສີນ.

### ການຈັດການ GBV ຜ່ານຄວາມພະຍາຍາມໃນການຫຼຸດຜ່ອນຄວາມສ່ຽງໄພພິບັດໃນຟີລິບປິນ

ປະເທດຟີລິບປິນເປັນປະເທດ ທີ່ສ່ຽງຕໍ່ໄພພິບັດໂດຍປະສົບກັບພາຍຸໄຕ້ຝຸ່ນສະເລ່ຍປີລະ 20 ຄັ້ງ, ເຊິ່ງຍິ່ງສ້າງຄວາມເສຍຫາຍຫຼາຍຂຶ້ນ ອັນເນື່ອງມາຈາກການປ່ຽນແປງດິນຟ້າອາກາດ.[46]

GBV ມີຜົນກະທົບຕໍ່ວຽກງານຂອງເຂົາເຈົ້າແນວໃດ:
ໂຄງການ DRM ສ່ວນໃຫຍ່ໃນພາກພື້ນສຸມໃສ່ການທຳຄວາມສະອາດ ແລະ ການຝຶກອົບຮົມທັກສະ, ແຕ່ມັກຈະເບິ່ງຂ້າມ GBV, ເຊິ່ງຈຳກັດການມີສ່ວນຮ່ວມຂອງຜູ້ຍິງ ແລະ ເດັກຍິງ ແລະ ຄວາມປອດໄພໃນຄວາມພະຍາຍາມໂຕ້ຕອບ. ໃນເວລາທີ່ຜູ້ຍິງ ແລະ ເດັກຍິງບໍ່ສາມາດມີສ່ວນຮ່ວມໃນໂຄງການ DRM, ສິ່ງນີ້ຫຼຸດໂອກາດຂອງເຂົາເຈົ້າໃນການສ້າງທັກສະ ແລະ ຄວາມຮູ້ທີ່ຈຳເປັນທີ່ຈະຊ່ວຍໃຫ້ເຂົາເຈົ້າ ແລະ ຄອບຄົວສາມາດຢູ່ໄດ້ຢ່າງປອດໄພໃນລະຫວ່າງໄພພິບັດ.

ວິທີການທີ່ໂຄງການຈັດການຄວາມຮຸນແຮງທາງເພດ (GBV):

ໃນປີ 2020, ອົງກອນທີ່ນຳພາໂດຍຄົນພື້ນເມືອງ "ການລິເລີ່ມຂອງແມ່ຍິງໜຸ່ມ (YouWIn)" ໄດ້ສ້າງຕັ້ງໂຄງການຕິດຕາມບັນຫາ GBV ເພື່ອຈັດການກັບຊ່ອງຫວ່າງນີ້. ແຕ່ລະກຸ່ມປະກອບມີຜູ້ຍິງ 15-20 ຄົນຈາກຊຸມຊົນ LGBTQIA+, ຜູ້ຍິງທີ່ມີຄວາມພິການ ແລະ ທັງຜູ້ຍິງທີ່ເປັນຄົນພື້ນເມືອງ ແລະ ບໍ່ແມ່ນຄົນພື້ນເມືອງ. ກຸ່ມຕິດຕາມ GBV ເຫຼົ່ານີ້ລະບຸຜູ້ຍິງທີ່ມີຄວາມສ່ຽງ, ຊ່ວຍບັນທຶກຂໍ້ມູນຄວາມຮຸນແຮງ, ສົ່ງຕໍ່ຜູ້ລອດຊີວິດໄປສູ່ບໍລິການຊ່ວຍເຫຼືອ, ໃຫ້ການຊ່ວຍເຫຼືອດ້ານສຸຂະພາບຈິດໃນເບື້ອງຕົ້ນ ແລະ ຊ່ວຍເຫຼືອຜູ້ລອດຊີວິດໃນການລາຍງານການລ່ວງລະເມີດ. ພວກເຂົາຍັງສະໜັບສະໜູນສິດທິຜູ້ຍິງ, ຮ່ວມມືກັບບໍລິການທ້ອງຖິ່ນທີ່ຂາດແຄນຊັບພະຍາກອນ ແລະ ເຄື່ອນໄຫວໃນສູນການອົບພະຍົບ, ບ່ອນທີ່ມີຄວາມສ່ຽງດ້ານ GBV ແລະ SEAH ສູງ. ອົງກອນໄດ້ປະເຊີນໜ້າກັບການຕອບໂຕ້ຈາກຜູ້ຊາຍບາງຄົນທີ່ຂັດຂວາງການເຂົ້າຮ່ວມກຸ່ມຂອງເມຍຂອງເຂົາເຈົ້າ. ເພື່ອແກ້ໄຂບັນຫານີ້, ພວກເຂົາເຮັດວຽກຢ່າງໃກ້ຊິດກັບຊຸມຊົນເພື່ອທ້າທາຍບັນທັດຖານທີ່ເປັນອັນຕະລາຍ.

ການຮຽນຮູ້ທີ່ສຳຄັນ:
